ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ການຄຸ້ມຄອງຄວາມສ່ຽງຂອງຜູ້ໃຫ້ບໍລິການທາງດ້ານການເງິນ

ຄືດັ່ງທຸກທ່ານຮູ້ນຳກັນແລ້ວວ່າ ຄວາມສ່ຽງແມ່ນສິ່ງທີ່ອາດເກີດຂຶ້ນໂດຍບໍ່ຄາດຄິດລ່ວງໜ້າ ແລະ ອາດມີຜົນເສຍຫາຍແກ່ອົງກອນ ຫຼື ຫົວໜ່ວຍງານຂອງຕົນໄດ້ ຊຶ່ງຄວາມສ່ຽງນັ້ນ ອາດມາຈາກຫລາຍປັດໄຈເຊັ່ນ: ຄວາມບໍ່ແນ່ນອນດ້ານຕະຫລາດ (ການສະເໜີ ແລະ ສະໜອງ), ການວາງແຜນໂຄງການຜິດພາດ, ອຸປະຕິເຫດ ຫຼື ໄພພິບັດທາງທຳມະຊາດ ແລະ ອື່ນໆ. ຊຶ່ງຜົນທີ່ຕາມມານັ້ນ ເປັນຜົນທີ່ບໍ່ມີໃຜຕ້ອງການ. ເພື່ອຫລີກລຽງ ຫຼື ຫລຸດຜ່ອນຄວາມສ່ຽງໃຫ້ໜ້ອຍລົງ ເທົ່າທີ່ ເປັນໄປໄດ້ ຈຶ່ງພາໃຫ້ເກີດມີການບໍລິຫານຄວາມສ່ຽງດັ່ງກ່າວ; ສະນັ້ນ, ຜູ້ຂຽນຈະມານຳສະເໜີການບໍລິຫານຄວາມສ່ຽງ ຊຶ່ງແມ່ນຂະບວນການເລີ່ມຕົ້ນດ້ວຍການໄຈ້ແຍກ ແລະ ປະເມີນຄວາມສ່ຽງຕາມມາດ້ວຍການນຳໃຊ້ຊັບພະຍາກອນທີ່ເໝາະສົມເພື່ອຕິດຕາມ ແລະ ເຮັດໃຫ້ຄວາມສ່ຽງລຸດຜ່ອນ ຫຼື ບັນເທົາລົງ. ເປົ້າໝາຍດັ່ງກ່າວກໍເພື່ອໃຫ້ໜ່ວຍງານສາມາດດຳເນີນກິດຈະການຢ່າງມີປະສິດທິພາບ ດ້ວຍເຫດຜົນທີ່ກ່າວມານີ້ ໃນມາດຕາ 9 ຂອງດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ ສະບັບເລກທີ 225/ລບ, ລົງວັນທີ 06 ເມສາ 2020 ໄດ້ກຳນົດໃຫ້ການບໍລິຫານຄວາມສ່ຽງຂອງຜູ້ໃຫ້ບໍລິການທາງການເງິນ ຊຶ່ງມີເນື້ອໃນມີລະບຽບການ, ວິທີການ ແລະ ຂັ້ນຕອນທີ່ເໝາະສົມ ແລະ ຮັດກຸມ ເພື່ອບໍລິຫານຄວາມສ່ຽງໃນການບໍລິການທາງດ້ານການເງິນ ໂດຍມີແຜນການ ແລະ ລະບົບຮອງຮັບບັນດາຄວາມສ່ຽງທີ່ອາດຈະເກີດຂຶ້ນ ເປັນຕົ້ນຄວາມສ່ຽງທາງດ້ານລາຄາ, ຄວາມສ່ຽງດ້ານການຕະຫຼາດ, ຄວາມສ່ຽງດ້ານການຈຳໜ່າຍຜະລິດຕະພັນ.

ຫຼັກການໃນການບໍລິຫານຄວາມສ່ຽງ ທີ່ມັກນຳໃຊ້ໃນປະຈຸບັນກໍມີຫລາຍຫຼັກການຊຶ່ງສາມາດສັງລວມໄດ້ເຊັ່ນ: ຂະບວນການລຽງລຳດັບຄວາມຮ້າຍແຮງຂອງຄວາມສ່ຽງ ວ່າຄວາມສ່ຽງປະເພດໃດອາດສາມາດສ້າງຄວາມເສຍຫາຍຫລາຍກວ່າ ແລະ ອາດສາມາດເກີດຂຶ້ນກັບໜ່ວຍງານຂອງຕົນໄດ້ ຄວນແກ້ຄວາມສ່ຽງປະເພດນັ້ນກ່ອນ ສ່ວນຄວາມສ່ຽງຕໍ່າກວ່າກໍຄວນຈັດການບໍລິຫານຕາມພາຍຫລັງກໍເປັນໄດ້. ນອກຈາກນີ້ການບໍລິຫານຄວາມສ່ຽງອີກປະເພດໜຶ່ງກໍຄືປະຕິບັດຕາມ 4 ຂັ້ນຕອນ ເຊັ່ນ:

ປະເມີນຄວາມສ່ຽງ (Risk assessment) ເປັນຂັ້ນທີ່ນຳໃຊ້ເພື່ອກຳນົດຂະບວນການ ແລະ ວິທີເພື່ອໄຈ້ແຍກຄວາມສ່ຽງ ແລະ ຜົນກະທົບທີ່ບໍ່ດີອາດຈະຕາມມາ.

ທົບທວນຄວາມສ່ຽງ (Risk evaluation) ເປັນຂະບວນການທີ່ນຳໃຊ້ ເພື່ອສົມທຽບຕີລາຄາ ຄິດໄລ່ຄວາມສ່ຽງກັບຄວາມສ່ຽງທີ່ອາດເກີດຂຶ້ນກັບຕົນກັບຄວາມສ່ຽງທີ່ໄດ້ກຳນົດໄວ້ ໃນເບື້ອງຕົ້ນ ເພື່ອກຳນົດຄວາມສຳຄັນ ຂອງຄວາມສ່ຽງ. ການບໍລິຫານຈັດການຄວາມສ່ຽງໃນໜ່ວຍງານຂອງຕົນ ເລີ່ມຕົ້ນດ້ວຍການຕັດສິນໃຈ ທີ່ຈະບໍລິຫານຈັດການຄວາມສ່ຽງຢ່າງມີໄຫວພິບໃນທົ່ວໜ່ວຍງານຂອງຕົນ.

ການຈັດການ (Risk management) ຂະບວນການທີ່ຈະໃຊ້ໃນການຄຸ້ມຄອງບໍລິຫານ ໃຫ້ໂອກາດ ທີ່ຈະເກີດເຫດການຄວາມສ່ຽງລູດລົງ ຫຼື ຜົນກະທົບ ຂອງຄວາມເສຍຫາຍ ຈາກເຫດການຄວມສ່ຽງລູດລົງໃຫ້ຢູ່ໃນລະດັບທີ່ສາມາດຍອມຮັບໄດ້ ຊຶ່ງປະກອບມີການຍອມຮັບ, ການຫຼູດຜ່ອນ, ການກະຈາຍ ແລະ ການລົກລຽງຄວາມສ່ຽງ

ການນໍາໃຊ້ມາດຕະການຄວບຄຸມ (Risk Measurement) ເປັນຂໍ້ມູນກ່ຽວກັບການຕັດສິນໃຈ ເພື່ອຫຼີກລ້ຽງຄວາມສ່ຽງ  ເພາະສະນັ້ນ ເມື່ອນໍາໃຊ້ມາດຕະການໄປແລ້ວ ມີຜົນຕໍ່ໜ່ວຍງານຕົນເພື່ອໃຫ້ໄດ້ມາຄວາມສ່ຽງທີ່ນ້ອຍ ຫຼື ໝົດໄປກໍເປັນໄດ້.  ຊຶ່ງນັ້ນກໍເປັນວົງຈອນ ໃນການຕິດຕາມ ແລະ ບໍລິຫານຄວາມສ່ຽງເຊັ່ນກັນ.

ຫວັງວ່າບົດຄວາມນີ້ ອາດເປັນຜົນດີໃຫ້ແກ່ຜູ້ສົນໃຈອ່ານ ເພື່ອສຶກສາຄົ້ນຄວ້າ ແລະ ເປັນເປັນຂໍ້ມູນບາງສ່ວນ ໃນການປະກອບເອກະສານ ແລະ ເປັນບ່ອນສົມທຽບ ຄວາມຄິດເຫັນຂອງຕົນໄດ້.

ບົດຄວາມໂດຍ: ທອງຈັນ ສຸກສະກຸນ, ກົມນິຕິກໍາ, ທະນາຄານ ແຫ່ງ ສປປ ລາວ

ເງິນກີບຄືກຽດສັກສີຂອງຄົນລາວ